# ຖະແຫຼງການຮ່ວມກອງປະຊຸມລັດຖະມົນຕີສາທາລະນະສຸກອາຊຽນ ບວກ ສປ ຈີນ ຄັ້ງທີ 7 ຄັ້ງວັນທີ 30 ສິງຫາ 2019, ທີ່ສຽມຣຽບ, ຣາຊະອານາຈັກກຳປູເຈຍ.

1. ພວກເຮົາ, ລັດຖະມົນຕີກະຊວງສາທາລະນະສຸກ ຂອງບັນດາປະເທດສະມາຊິກແຫ່ງສະມາຄົມບັນດາປະຊາຊາດອາຊີຕາເວັນອອກສ່ຽງໃຕ້ (ອາຊຽນ), ຕາງໜ້າໂດຍປະເທດບູຣໄນ ດາຣູສະລາມ, ຣາຊະອານາຈັກ ກຳປູເຈຍ, ສາທາລະນະລັດອິນໂດເນເຊຍ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ປະເທດມາເລເຊຍ, ສະຫະພາບມຽນມາ, ສາທາລະນະລັດຟີລິບປິນ, ສາທາລະນະລັດ ສິງກະໂປ, ຣາຊະອານາຈັກໄທ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ແລະ ທ່ານລັດຖະມົນຕີສາທາລະນະສຸກ ແຫ່ງສາທາລະນະ ປະຊາຊົນ ຈີນ ໄດ້ຈັດກອງປະຊຸມລັດຖະມົນຕີສາທາລະນະສຸກອາຊຽນບວກ ສປ ຈີນ ຄັ້ງທີ 7 ໃນວັນທີ 30 ສິງຫາ 2019, ທີ່ສຽມຣຽບ, ຣາຊະອານາຈັກກຳປູເຈຍ .
2. ພວກເຮົາ ສະໜັບສະໜູນຢ່າງເຕັມສ່ວນ ໃນການຮວມເອົານະວັດຕະກຳ ເພື່ອສົ່ງເສີມຄຸນນະພາບການບໍລິການສາທາລະນະສຸກ ເປັນຂົງເຂດບູລິມະສິດໃໝ່ ພາຍໃຕ້ການຮ່ວມມືດ້ານສາທາລະນະສຸກອາຊຽນ-ສປ ຈີນ ປະຈຳປີ 2020-2021, ເຊິ່ງຂົງເຂດດັ່ງກ່າວ ແມ່ນເພີ່ມເຕີມເຂົ້າມາໃໝ່ ນອກຈາກຂົງເຂດການຮ່ວມມືບູລິມະສິດທີ່ມີມາກ່ອນແລ້ວ ໃນປີ 2019-2020, ປະກອບມີ ການປ້ອງກັນ ແລະ ຄວບຄຸມພະຍາດບໍ່ຕິດຕໍ່, ການສົ່ງເສີມການມີສຸຂະພາບທີ່ດີ ແລະ ຜູ້ສູງອາຍຸທີ່ແຂງແຮງ, ການແກ້ໄຂບັນຫາພະຍາດຕິດຕໍ່ ໂດຍສຸມໃສ່ພິເສດໃນ ພະຍາດວັນນະໂລກ, ພະຍາດໄຂ້ຍຸງ, ພະຍາດເຮັດສໄອວີ ແລະ ພະຍາດເອດສ, ພະຍາດໃບໄມ້ໃນເລືອດ, ການຮ່ວມມື ຮ່ວມກັນໃນການປ້ອງກັນພະຍາດຕິດຕໍ່ຢູ່ເຂດຊາຍແດນ, ການສ້າງຄວາມເຂັ້ມແຂງດ້ານຄຸນນະພາບຂອງຢາພື້ນເມືອງ ແລະ ຢາຫຼວງ.
3. ພວກເຮົາໝາຍໝັ້ນສ້າງຄວາມເຂັ້ມແຂງ ກ່ຽວກັບ ນະວັດຕະກຳເພື່ອສົ່ງເສີມຄຸນນະພາບການບໍລິການສາທາລະນະສຸກໂດຍນຳໃຊ້ຂໍ້ມູນຂ່າວສານ ແລະ ຜົນໄດ້ຮັບສາທາລະນະສຸກ ໃນການແກ້ໄຂສິ່ງທ້າທາຍ ໃນການສົ່ງເສີມຄຸນນະພາບການບໍລິການສາທາລະນະສຸກ ໂດຍຜ່ານການສົ່ງເສີມນະວັດຕະກຳທາງສຸຂະພາບ, ການປະຕິບັດງານທີ່ມີຄຸນນະພາບ ແລະ ການຮັບປະກັນສະພາບແວດລ້ອມທີ່ເໝາະສົມ ສຳລັບນະວັດຕະກຳດັ່ງກ່າວ. ຄຳໝາຍໝັ້ນນີ້ ແມ່ນຈະຖືກລວມເຂົ້າໃນແຜນວຽກທີ່ກ່ຽວຂ້ອງ ຂອງການຮ່ວມມືນຳຂະແໜງການສາທາລະນະສຸກອາຊຽນ ພາຍຫຼັງປີ 2020.
4. ພວກເຮົາໝາຍໝັ້ນ ໃນການສືບຕໍ່ສົນທະນາດ້ານຄວາມສຳຄັນ ແລະ ຜົນກະທົບ ຂອງນະວັດຕະກຳ ເພື່ອສົ່ງເສີມຄຸນນະພາບການບໍລິການສາທາລະນະສຸກ ຊຶ່ງກ່ຽວຂ້ອງກັບການລວມກຸ່ມຂອງ (1) ຄວາມປອດໄພ, (2) ປະສິດຕິພາບ, (3) ການສຸມໃສ່ຄົນເຈັບ, (4) ເວລາໂຕຈິງ, (5)ປະສິດທິຜົນ, (6) ຄວາມເທົ່າທຽມ, ແລະ (7) ການເຊື່ອມສານ. ສະນັ້ນ, ພວກເຮົາມີຄວາມຍິນດີທີ່ຈະແບ່ງປັນປະສົບການ ແລະ ການປະຕິບັດໂຕຈິງທີ່ດີ ໃນພາກພື້ນ ເພື່ອກ້າວໄປສູ່ການສະໜັບສະໜູນການຈັດຕັ້ງປະຕິບັດການບໍລິການສາທາລະນະສຸກທີ່ມີຄຸນນະພາບ ເພື່ອກຳນົດຂົງເຂດການລິເລີ່ມທີ່ເປັນບູລິມະສິດ ເຊັ່ນ ການປະກັນສຸຂະພາບທຸກຖ້ວນໜ້າ ແລະ ແຜນບູລິມະສິດສາທາລະນະສຸກແຫ່ງຊາດ.
5. ພວກເຮົາຢັ້ງຢືນການສະໜັບສະໜູນ ການຈັດຕັ້ງປະຕິບັດການປະກັນສຸຂະພາບທຸກຖ້ວນໜ້າ ເພື່ອຮັບປະກັນການເຂົ້າເຖິງຄຸນນະພາບ ແລະ ການບໍລິການສຸຂະພາບ ທີ່ມີສົມລາຄາ ແລະ ມີປະສິດຕິຜົນ ໂດຍປາດສະຈາກຄວາມສ່ຽງດ້ານຄວາມຫຍຸ້ງຍາກທາງການເງິນ, ໂດຍຄຳນຶງເຖິງຄຳແນະນຳຂອງອົງການອະນາໄມໂລກ ກ່ຽບກັບ ປະຊາຊົນເປັນໃຈກາງຂອງການບໍການສາທາລະນະສຸກ ແລະ ການປັບປຸງຄຸນນະພາບ.

6. ພວກເຮົາຮັບຮູ້ ການຊ່ວຍເຫຼືອທີ່ໄດ້ຮັບ ແລະ ຈະສືບຕໍ່ໃຫ້ຄຳໝັ້ນໃນການຮ່ວມມືຢ່າງໃກ້ຊິດ ກັບບັນດາຄູ່ຮ່ວມເຈລະຈາ ແລະ ບັນດາຄູ່ຮ່ວມພັດທະນາ ໂດຍຈະປະຕິບັດຕາມກົດລະບຽບຂະບວນການໃນການມີສ່ວນຮ່ວມຂອງໜ່ວຍງານຕ່າງໆ ຮ່ວມກັບຂະແໜງການສາທາລະນະສຸກອາຊຽນ.
7. ພວກເຮົາ ຫວັງວ່າຈະມີການແລກປ່ຽນຄຳຄິດເຫັນ ແລະ ການຮ່ວມມືໃນການພັດທະນາສາທາລະນະສຸກ ຢູ່ກອງປະຊຸມຄັ້ງຕໍ່ໄປທີ່ປະເທດອິນໂດເນເຊຍ ໃນປີ 2021.

.........................